ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງບໍລິຄຳໄຊ

ເລກທີ..94...../ຂບຊ

ບໍລິຄຳໄຊ,ວັນທີ..28..ກຸມພາ..2019

# ຂໍ້ຕົກລົງ

## ວ່າດ້ວຍການຄຸ້ມຄອງ

## ການພັດທະນາຕົວເມືອງຂອງເມືອງປາກຊັນ

- ອີງຕາມ ກົດໝາຍວ່າດ້ວຍວ່າການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ພາກທີ III, ໝວດທີ IV ມາດຕາ 19 ແລະ ມາດຕາ 20 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມ ກົດໝາຍວ່າດ້ວຍການສ້າງນິຕິກຳ ສະບັບເລກທີ 19/ສພຊ, ລົງວັນທີ 12 ກໍລະກົດ 2012;
- ອີງຕາມ ກົດໝາຍວ່າດ້ວຍການຜັງເມືອງ ສະບັບເລກທີ 40/ສພຊ, ລົງວັນທີ 16 ພະຈິກ 2017;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີສະບັບເລກທີ່ 177/ນຍ, ລົງວັນທີ 22 ທັນວາ 1997 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງ;
- ອີງຕາມ ມະຕິກອງປະຊຸມສະພາປະຊາຊົນແຂວງບໍລິຄຳໄຊ ສະບັບເລກທີ 103/ສພຂ.ຂບຊ, ລົງວັນທີ 24 ກໍລະກົດ 2017 ວ່າດ້ວຍການຮັບຮອງເອົາແຜນສ້າງ ແລະ ປັບປຸງນິຕິກຳ ໄລຍະປີ 2017-2020 ຂອງສະພາປະຊາຊົນແຂວງ ຊຸດທີ່ I;
- ອີງຕາມ ມະຕິກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາປະຊາຊົນແຂວງຊຸດທີ I, ຄັ້ງວັນທີ 1 ກຸມພາ 2019.

## ເຈົ້າແຂວງບໍລິຄຳໄຊ ຕົກລົງ:

## ໝວດທີ 1

## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ເພື່ອກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງການພັດທະນາຕົວເມືອງຂອງເມືອງປາກຊັນ, ແນ່ໃສ່ເຮັດໃຫ້ການພັດທະນາຕົວເມືອງຂອງເມືອງປາກຊັນ ມີປະສິດຕິຜົນສູງ, ມີສ່ວນຮ່ວມຂອງຊຸມຊົນໃນການປົກປັກຮັກສາ, ຄຸ້ມຄອງ, ນຳໃຊ້, ເພື່ອປະກອບສ່ວນໃຫ້ແກ່ການພັດທະນາ ມີຄວາມເປັນລະບຽບຮຽບຮ້ອຍ, ຊຸກຍູ້ສົ່ງເສີມການລົງທຶນ, ການທ່ອງທ່ຽວ ແລະ ການພັດທະນາເສດຖະກິດ-ສັງຄົມຂອງແຂວງໃຫ້ດີຂຶ້ນ. ເພື່ອບັນລຸວິໄສທັດຂອງເມືອງປາກຊັນ ໃຫ້ເປັນແດນກຸຫຼາບ ສະຫງົບ ສີຂຽວ ສະອາດງາມຕາພັດທະນາໃຫ້ຍືນຍົງ.

**ມາດຕາ 2. ການຄຸ້ມຄອງການພັດທະນາຕົວເມືອງຂອງເມືອງປາກຊັນ**

ການຄຸ້ມຄອງການພັດທະນາຕົວເມືອງຂອງເມືອງປາກຊັນ ແມ່ນການຄຸ້ມຄອງກິດຈະກຳການພັດທະນາຮອບດ້ານຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ຢູ່ໃນຕົວເມືອງຂອງເມືອງປາກຊັນ ເຊັ່ນ: ການນຳໃຊ້ທີ່ດິນ, ການປຸກສ້າງ, ການປະດັບປະດາ, ການປົກປັກຮັກສາສິ່ງແວດລ້ອມຕົວເມືອງ ແລະ ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 3. ອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:

1. **ຕົວເມືອງຂອງເມືອງປາກຊັນ** ໝາຍເຖິງ: ພື້ນທີ່ ຂອບເຂດຈຳນວນ 19 ບ້ານ ທີ່ກຳນົດເປັນເຂດພັດທະນະນຳໃຊ້ຂໍ້ຕົກລົງສະບັບນີ້ທີ່ ມີປະຊາກອນດຳລົງຊີວິດໜາແໜ້ນ ປະກອບອາຊີບຢູ່ໃນຂົງເຂດອຸດສາຫະກຳ ການຄ້າ, ການບໍລິການເປັນສ່ວນຫຼາຍ ແລະ ມີໂຄງລ່າງພື້ນຖານທາງດ້ານເສດຖະກິດ-ສັງຄົມ;
2. **ການຄຸ້ມຄອງ** ໝາຍເຖິງ: ການກຳນົດລະບຽບໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ປະກອບສ່ວນໃນການນຳໃຊ້, ປົກປັກຮັກສາການພັດທະນາ, ການປະດັບປະດາ, ການຮັກສາສິ່ງແວດລ້ອມ;
3. **ການພັດທະນາ** ໝາຍເຖິງ: ການປັບປຸງ, ກໍ່ສ້າງພື້ນຖານທາງດ້ານເສດຖະກິດ-ວັດທະນະທຳສັງຄົມໃຫ້ມີຄວາມຈະເລີນເຕີບໂຕ, ຊີວິດການເປັນຢູ່ຂອງປະຊາຊົນດີຂື້ນ;
4. **ການມີສ່ວນຮ່ວມ** ໝາຍເຖິງ: ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງເຂົ້າໃນການພັດທະນາຕົວເມືອງຂອງເມືອງປາກຊັນ.

**ມາດຕາ 4. ນະໂຍບາຍຂອງລັດ**

ລັດຊຸກຍູ້, ສົ່ງເສີມ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດປະກອບສ່ວນສະຕິປັນຍາ, ກຳລັງແຮງ, ທຶນຮອນ ແລະ ເຕັກນິກວິຊາການເຂົ້າໃນການຄຸ້ມຄອງການພັດທະນາຕົວເມືອງຂອງເມືອງປາກຊັນຢ່າງທົ່ວເຖິງ ເພື່ອຕອບສະໜອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ - ສັງຄົມຂອງແຂວງ.

ລັດປະກອບສ່ວນທາງດ້ານບຸກຄະລາກອນ, ງົບປະມານ ແລະ ພາຫະນະອຸປະກອນ ເຂົ້າໃນວຽກງານການພັດທະນາຕົວເມືອງຂອງເມືອງປາກຊັນຕາມຄວາມເໝາະສົມ.

**ມາດຕາ 5. ຫຼັກການກ່ຽວກັບການຄຸ້ມຄອງການພັດທະນາຕົວເມືອງຂອງເມືອງປາກຊັນ**

ຫຼັກການພື້ນຖານກ່ຽວກັບການຄຸ້ມຄອງການພັດທະນາຕົວເມືອງຂອງເມືອງປາກຊັນ ມີດັ່ງນີ້:

1. ຮັບປະກັນຄວາມສອດຄ່ອງກັບແນວທາງນະໂຍບາຍ, ຍຸດທະສາດ, ແຜນພັດທະນາເສດຖະກິດ - ສັງຄົມຂອງແຂວງ, ເມືອງ ແລະ ຖືກຕ້ອງຕາມກົດໝາຍ;
2. ຮັບປະກັນການຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດຕົວເມືອງຂອງເມືອງປາກຊັນ;
3. ຮັບປະກັນໃຫ້ມີຜົນປະໂຫຍດຕໍ່ລັດ, ລວມໝູ່, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ຜູ້ປະກອບການທັງພາຍໃນ ແລະ ຕ່າງປະເທດ;
4. ມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ການມີສ່ວນຮ່ວມຂອງສັງຄົມຢ່າງກວ້າງຂວາງ.
5. ຮັບປະກັນຄວາມໂປ່ງໃສ, ເປີດເຜີຍ, ຍຸຕິທຳ ແລະ ສາມາດກວດກາໄດ້.

**ມາດຕາ 6. ຂອບເຂດນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສະເພາະຢູ່ໃນພື້ນທີ່ຕົວເມືອງຂອງເມືອງປາກຊັນ ຕາມຂອບເຂດທີ່ ອີງການພັດທະນາ ແລະ ບໍລິຫານຕົວເມືອງປາກຊັນຮັບຜິດຊອບ ກວມເອົາ 19 ບ້ານ ຄື: ບ້ານປາກປີງ, ບ້ານປາກຊັນ, ບ້ານໂພໄຊ, ບ້ານສີມຸງຄຸນ, ບ້ານໂພສີ, ບ້ານນີໄຊ, ບ້ານສີວິໄລ, ບ້ານສອນສະຫວັນ, ບ້ານນາຈິກ, ບ້ານສີສະອາດ, ບ້ານທ່າສີໄຄ, ບ້ານໂພນສະອາດ, ບ້ານທົ່ງນ້ອຍ, ບ້ານທົ່ງໃຫຍ່, ບ້ານຊະນະໄຊ, ບ້ານອານຸສອນໄຊ, ບ້ານທົ່ງໄຊ, ບ້ານໂພນໄຊ, ບ້ານຫ້ວຍສຽດ.

## ໝວດທີ 2
## ການຄຸ້ມຄອງການພັດທະນາຕົວເມືອງຂອງເມືອງປາກຊັນ

**ມາດຕາ 7. ການຄຸ້ມຄອງການພັດທະນາຕົວເມືອງຂອງເມືອງປາກຊັນ**

ການຄຸ້ມຄອງການພັດທະນາຕົວເມືອງຂອງເມືອງປາກຊັນ ມີດັ່ງນີ້:

1. ການຄຸ້ມຄອງນຳໃຊ້ ແລະ ການພັດທະນາທີ່ດິນ
2. ການຄຸ້ມຄອງສິ່ງປະດັບປະດາ ແລະ ປ້າຍໂຄສະນາ;
3. ການຄຸ້ມຄອງສິ່ງປຸກສ້າງ;
4. ການຄຸ້ມຄອງກິດຈະການສາທາລະນະ;
5. ການຄຸ້ມຄອງປົກປັກຮັກສາເສັ້ນທາງ ແລະ ຄວາມເປັນລະບຽບຮຽບຮ້ອຍຕາມແຄມທາງ;
6. ການຄຸ້ມຄອງສັດລ້ຽງ.

**ມາດຕາ 8. ການຄຸ້ມຄອງນຳໃຊ້ ແລະ ການພັດທະນາທີ່ດິນ**

ການຄຸ້ມຄອງນຳໃຊ້ ແລະ ການພັດທະນາທີ່ດິນ ມີດັ່ງນີ້:

1. ບຸກຄົນ,ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ຕ້ອງນຳໃຊ້ເນື້ອທີ່ດິນຂອງຕົນຕາມຂອບເຂດທີ່ກຳນົດໄວ້ໃນໃບແຈ້ງເນື້ອທີ່ດິນ ແລະ ໃບຕາດິນເທົ່ານັ້ນໂດຍໃຫ້ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍວ່າດ້ວຍທີ່ດິນຢ່າງເຂັ້ມງວດ, ຕ້ອງປົກປັກຮັກສາຕອນດິນຂອງຕົນບໍ່ໃຫ້ຮົກເຮື້ອ ແລະ ສິ່ງເສດເຫຼືອຕ່າງໆ
2. ບຸກຄົນ,ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ມີຈຸດປະສົງຢາກນຳໃຊ້ເນື້ອທີ່ດິນໃນຂອບເຂດດິນສະຫງວນຂອງລັດ, ດິນສະຫງວນທາງ ແລະ  ດິນສາທາລະນະ ຕ້ອງໄດ້ຮັບອະນຸຍາດຈາກ ອົງການພັດທະນາ ແລະ ບໍລິຫານຕົວເມືອງປາກຊັນ ແລະ ຂະແໜງການທີ່ກ່ຽວຂ້ອງ.
3. ການຂຸດດິນ, ຈົກດິນ, ຖົມດິນ, ປັບໜ້າດິນ, ເຈາະນ້ຳບາດານ ແລະ ຈົກໜອງປາໃນຕົວເມືອງຂອງເມືອງປາກຊັນ ຕ້ອງໄດ້ສະເໜີຜ່ານ ອົງການພັດທະນາ ແລະ ບໍລິຫານຕົວເມືອງປາກຊັນ ເພື່ອປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງອອກອະນຸຍາດຕາມລະບຽບ;
4. ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ຂຸດດິນ, ຖົມດິນ, ປັບໜ້າດິນທີ່ສູງກ່ວາດິນອ້ອມຂ້າງ ແລະ ເສັ້ນທາງທີ່ພາໃຫ້ສະພາບພື້ນທີ່ດິນມີການປ່ຽນແປງຈາກສະພາບເດີມ ສົ່ງຜົນກະທົບຕໍ່ສະພາບແວດລ້ອມ ເຮັດໃຫ້ນ້ຳ ແລະ ເສດດິນຕ່າງໆ ໄຫຼລົງສູ່ເສັ້ນທາງ ຫຼື ຕອນດິນອ້ອມຂ້າງ ຕ້ອງຮັບຜິດຊອບແກ້ໄຂຕໍ່ເຫດການດັ່ງກ່າວບໍ່ໃຫ້ມີຜົນກະທົບຕໍ່ບຸກຄົນ ແລະ ການຈັດຕັ້ງ;

**ມາດຕາ 9. ການຄຸ້ມຄອງສິ່ງປະດັບປະດາ ແລະ ປ້າຍໂຄສະນາ**

ການຄຸ້ມຄອງສິ່ງປະດັບປະດາ ແລະ ປ້າຍໂຄສະນາ ມີດັ່ງນີ້:

1. ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງຕ່າງໆ ທີ່ມີຈຸດປະສົງກໍ່ສ້າງປ້າຍໂຄສະນາ ຫຼື ຕິດຕັ້ງປ້າຍໂຄສະນາໃດໜຶ່ງພາຍໃນຕົວເມືອງຂອງເມືອງປາກຊັນຕ້ອງໄດ້ສະເໜີຂໍອະນຸຍາດ ທາງດ້ານເຕັກນິກ ສະຖານທີ່ຕິດຕັ້ງ ຈາກ ອົງການພັດທະນາ ແລະ ບໍລິຫານຕົວເມືອງປາກຊັນ. ດ້ານເນື້ອໃນ, ສີສັນ ຂອງປ້າຍຕ້ອງຂໍອະນຸຍາດນຳຂະແໜງ ຖະແຫຼງຂ່າວ ວັດທະນະ ແລະ ທ່ອງທ່ຽວ.
2. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ທີ່ຕິດປ້າຍຄຳຂວັນຂ້າມທາງ, ແຄມທາງ, ສະຖານທີ່ສາທາລະນະ ໄດ້ສະເໜີຂໍອະນຸຍາດ ຈາກ ອົງການພັດທະນາ ແລະ ບໍລິຫານຕົວເມືອງປາກຊັນ. ການຕິດຕັ້ງຕ້ອງຕິດໃສ່ສະຖານທີ່ສູງຮັບປະກັນຄວາມປອດໄພ, ມີຄວາມໂດດເດັ່ນ, ສາມາດຫຼຽວເຫັນ ແລະ ອ່ານໄດ້ງ່າຍ, ຫຼັງຈາກສຳເລັດພິທີແລ້ວ ຕ້ອງເກັບມ້ຽນ ພາຍຫຼັງສຳເລັດງານ ກຳນົດ 1 ເດືອນ ;
3. ທຸງຊາດ, ທຸງພັກ, ທຸງທິວ ທີ່ເອົາຂຶ້ນປະດັບປະດາຢູ່ແຕ່ລະຄົວເຮືອນ, ສຳນັກງານ, ອົງການໃນວັນບຸນສຳ

ຄັນຕ່າງໆ ຂອງຊາດ, ຂອງແຂວງ ຖືກຕ້ອງຕາມມາດຕະຖານ, ຕາມແຈ້ງການແນະນຳ, ຕິດໃສ່ບ່ອນໂດດເດັ່ນ ແລະ ມີຄວາມສະອາດສວຍງາມ.

**ມາດຕາ 10. ການຄຸ້ມຄອງສິ່ງປຸກສ້າງ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ຕ້ອງການປຸກສ້າງ, ສ້ອມແປງ, ຕໍ່ເຕີມອາຄານ, ເຮືອນ, ຮ້ານຄ້າ, ຮ້ານອາຫານ,ໂຮງແຮມ, ສາງສິນຄ້າ, ສຳນັກງານ, ຫ້ອງການ, ປ້ຳນ້ຳມັນ ແລະ ອື່ນໆ ຕ້ອງໄດ້ສະເໜີຜ່ານ ອົງການພັດທະນາ ແລະ ບໍລິຫານຕົວເມືອງປາກຊັນ ເພື່ອປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງອອກອະນຸຍາດຕາມລະບຽບ.

**ມາດຕາ 11. ການຄຸ້ມຄອງກິດຈະການສາທາລະນະ**

ການຄຸ້ມຄອງກິດຈະການສາທາລະນະ ມີດັ່ງນີ້:

1. ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງຕ້ອງມີພັນທະປົກປັກຮັກສາຊັບສິນສາທາລະນະເຊັ່ນ: ສວນສາທາລະນະ, ໄຟຟ້າເບື້ອງທາງ, ໄຟຟ້າປະດັບປະດາຕົວເມືອງ, ປ້າຍໂຄສະນາຕ່າງໆ, ປ້າຍສັນຍານຈາລະຈອນ, ໂຖດອກໄມ້, ຕົ້ນໄມ້ປະດັບຕາມເຂດສະຫງວນທາງ, ຕາມດິນສາທາລະນະ ແລະ ອື່ນໆ;
2. ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ຕ້ອງການຂາຍເຄື່ອງຕາມເຂດສະຫງວນທາງ, ແຄມທາງ ແລະ ບ່າທາງ ຕ້ອງໄດ້ຮັບອະນຸຍາດຈາກ ອົງການພັດທະນາ ແລະ ບໍລິຫານຕົວເມືອງປາກຊັນ.
3. ການບໍລິການຈຸດຂົນສົ່ງໂດຍສານ ລວມທັງລົດເມ, ລົດຕູ້, ລົດສາມລໍ້, ຕຸກໆ ແລະ ລົດຈັກຮັບຈ້າງ ຕ້ອງໄດ້ສະເໜີຜ່ານ ອົງການພັດທະນາ ແລະ ບໍລິຫານຕົວເມືອງປາກຊັນ ເພື່ອປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງອອກອະນຸຍາດຕາມລະບຽບ.
4. ການນຳໃຊ້ສະຖານທີ່ສາທາລະນະເປັນບ່ອນຈັດກິດຈະກຳຕ່າງໆ ຊົ່ວຄາວ ເຊັ່ນ: ງານຕະຫຼາດນັດ, ງານບຸນປະເພນີຂອງທ້ອງຖິ່ນ, ຂອງຄອບຄົວ ແລະ ອື່ນໆ ຕ້ອງໄດ້ສະເໜີຜ່ານ ອົງການພັດທະນາ ແລະ ບໍລິຫານຕົວເມືອງປາກຊັນ.
5. ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ເຂົ້າໄປໃຫ້ການບໍລິການຈັດງານສິ່ງສະການ ທີ່ປ່າຊ້າເມືອງປາກຊັນ ຕ້ອງໄດ້ຮັບອະນຸຍາດ ຈາກອົງການພັດທະນາ ແລະ ບໍລິຫານຕົວເມືອງປາກຊັນ ເພື່ອຮ່ວມກັນພັດທະນາ, ຮັກສາຄວາມສະອາດ ແລະ ສິ່ງແວດລ້ອມທີ່ດີ.

**ມາດຕາ 12. ການຄຸ້ມຄອງປົກປັກຮັກສາເສັ້ນທາງ ແລະ ຄວາມເປັນລະບຽບຮຽບຮ້ອຍຕາມແຄມທາງ**

ການຄຸ້ມຄອງປົກປັກຮັກສາເສັ້ນທາງ ແລະ ຄວາມເປັນລະບຽບຮຽບຮ້ອຍຕາມແຄມທາງ ມີຄື:

1. ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ມີອາຄານ, ສິ່ງປຸກສ້າງຕ່າງໆ, ສຳນັກງານຫ້ອງການ ທີ່ຕັ້ງຢູ່ແຄມຖະໜົນຫົນທາງ ຕ້ອງເປັນເຈົ້າການປົກປັກຮັກສາອານາໄມໜ້າທາງ, ທາງຍ່າງ, ຮູລະບາຍນ້ຳ, ຮ່ອງລະບາຍນ້ຳ ເຂດໜ້າບ້ານ, ເຂດທີ່ດິນກຳມະສິດຂອງຕົນໃຫ້ມີຄວາມສະອາດ, ຂີ້ເຫຍື້ອຊະຊາຍ, ເກີດປ່າຫຍ້າຮົກເຮື້ອສູງເກີນ 20 ຊັງຕີແມັດ, ສິ່ງອຸດຕັນຮູນ້ຳ ແລະ ຄອງລະບາຍນ້ຳຕ່າງໆ.
2. ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ບໍ່ໃຫ້ກອງດິນ, ຫີນ-ຊາຍ, ໄມ້ ແລະ ວັດສະດຸອື່ນໆ ຢູ່ດິນສາທາລະນະ ,ແຄມທາງລົດ, ທາງຍ່າງ, ເຂດສະຫງວນຕາມແຄມທາງຫຼວງ ແລະ ສະຖານທີ່ອື່ນໆ ທີ່ເປັນການກີດຂວາງ ບໍ່ເປັນລະບຽບຮຽບຮ້ອຍ ແລະ ບໍ່ສະອາດງາມຕາ ຕ້ອງມີຄວາມຮັບຜິດຊອບຕໍ່ເຫດການດັ່ງກ່າວ;
3. ການຈອດລົດທຸກປະເພດຕ້ອງປະຕິບັດຕາມກົດໝາຍຈາລະຈອນ ແລະ ລະບຽບການ ຢ່າງເຂັ້ມງວດ;
4. ບຸກຄົນ, ນິຕິບຸກຄົນ ບໍ່ໃຫ້ເອົາລົດຂຶ້ນຢຽບ ຫຼື ຈອດຕາມທາງຍ່າງ ທີ່ເປັນການກີດຂວາງ ແລະ ສ້າງຄວາມເສຍຫາຍຕໍ່ຊັບສິນຂອງລັດ ຕ້ອງມີຄວາມຮັບຜິດຊອບຕໍ່ເຫດການດັ່ງກ່າວ;
5. ບຸກຄົນ, ນິຕິບຸກຄົນ ບໍ່ໃຫ້ສ້ອມແປງລົດ, ລ້າງລົດ ທຸກປະເພດໃສ່ໜ້າຖະໜົນຫົນທາງ, ທາງຍາງ ແລະ ເຂດສາທາລະນະ ສ້າງຄວາມເປິະເປື້ອນ ຕ້ອງມີຄວາມຮັບຜິດຊອບຕໍ່ເຫດການດັ່ງກ່າວ;

6. ການຂົນສົ່ງຫີນ-ຊາຍ, ດິນດຳ, ດິນແດງ ຕ້ອງມີຜ້າປົກຮັບປະກັນບໍ່ໃຫ້ຕົກເຮ່ຍໃສ່ເສັ້ນທາງ ກໍລະນີຕົກເຮ່ຍໃສ່ເສັ້ນທາງ ແລະ ມີຜົນກະທົບເສຍຫາຍ ຕ້ອງມີຄວາມຮັບຜິດຊອບຕໍ່ເຫດການດັ່ງກ່າວ;
7. ການບັນທຸກນ້ຳໜັກຂົນສົ່ງເຂົ້າຕົວເມືອງຂອງເມືອງປາກຊັນ ຕ້ອງປະຕິບັດຕາມລະບຽບຂອງຂະແໜງໂຍທາທິການ ແລະ ຂົນສົ່ງ, ສຳລັບການຂົນສົ່ງໃນເຫດສະບານ ຫຼື ຮັບໃຊ້ວຽກງານກໍ່ສ້າງ ອະນຸຍາດໃຫ້ແກ່ໃສ່ລົດ 6 ລໍ້ ທີ່ມີນ້ຳໜັກລວມບໍ່ເກີນ 10 ໂຕນ. ສຳລັບລົດຂົນສົ່ງຫີນຊາຍປາກປົງທີ່ນຳໄປສະຕ໋ອກຢູ່ສະຖານທີ່ອື່ນ ໃຫ້ຂົນສົ່ງໄປທາງບ້ານໜອງຜ້າ.

**ມາດຕາ 13. ການຄຸ້ມຄອງສັດລ້ຽງ**

ການຄຸ້ມຄອງສັດລ້ຽງຂອງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ລ້ຽງສັດທຸກຊະນິດ ຕ້ອງຮັບຜິດຊອບປົກປັກຮັກສາ, ຂັງ, ຜູກ, ມັດ ຫ້າມປ່ອຍຊະຊາຍ ຕາມຖະໜົນຫົນທາງ, ເຂດສາທາລະນະ ແລະ ເຂດອະນຸລັກ ເຊິ່ງເປັນການລົບກວນຜູ້ອື່ນ, ສ້າງຄວາມເປິະເປື້ອນ ແລະ ກີດຂວາງການສັນຈອນພາໃຫ້ເກີດອຸປະຕິເຫດ ເຈົ້າຂອງສັດຕ້ອງມີຄວາມຮັບຜິດຊອບຕໍ່ເຫດການດັ່ງກ່າວຕາມລະບຽບກົດໝາຍ.

## ໝວດທີ 3
## ການຄຸ້ມຄອງຂີ້ເຫຍື້ອ ແລະ ການປ່ອຍນ້ຳເສຍນ້ຳເປື້ອນ ໃນຕົວເມືອງຂອງເມືອງປາກຊັນ

**ມາດຕາ 14.** ການຄຸ້ມຄອງຂີ້ເຫຍື້ອ ແລະ ການປ່ອຍນ້ຳເສຍນ້ຳເປື້ອນໃນຕົວເມືອງຂອງເມືອງປາກຊັນ

ການຄຸ້ມຄອງຂີ້ເຫຍື້ອ ແລະ ການປ່ອຍນ້ຳເສຍນ້ຳເປື້ອນໃນຕົວເມືອງຂອງເມືອງປາກຊັນມີດັ່ງນີ້:

1. ການເກັບມ້ຽນຂີ້ເຫຍື້ອ;
2. ການໃຫ້ບໍລິການຂີ້ເຫຍື້ອ;
3. ການຂົນສົ່ງຂີ້ເຫຍື້ອໄປຖິ້ມຢູ່ສະໜາມຂີ້ເຫຍື້ອ;
4. ການຖິ້ມຂີ້ເຫຍື້ອຕາມສະຖານທີ່ຕ່າງໆ;
5. ການຖິ້ມຂີ້ເຫຍື້ອອອກຈາກຍານພາຫະນະ;
6. ການຈູດເຜົາຂີ້ເຫຍື້ອ ຫຼື ສິ່ງເສດເຫຼືອ;
7. ການປ່ອຍນ້ຳເສຍນ້ຳເປື້ອນ.

**ມາດຕາ 15. ການເກັບມ້ຽນຂີ້ເຫຍື້ອ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ຕ້ອງຮັບຜິດຊອບເກັບມ້ຽນຂີ້ເຫຍື້ອຂອງຕົນເອງໃສ່ຖັງ, ກະຕ່າ, ໃສ່ຖົງ, ມີການຄັດແຍກຂີ້ເຫຍື້ອອອກເປັນ 3 ປະເພດຄື: ຂີ້ເຫຍື້ອປຽກ, ຂີ້ເຫຍື້ອແຫ້ງ ແລະ ຂີ້ເຫຍື້ອທີ່ເປັນພິດ ຮັບປະກັນບໍ່ໃຫ້ຖິ້ມຊະຊາຍ ຕ້ອງນຳໃຊ້ບໍລິການຂີ້ເຫຍື້ອນຳໜ່ວຍບໍລິການເກັບມ້ຽນຂີ້ເຫຍື້ອ.

**ມາດຕາ 16. ການໃຫ້ບໍລິການຂີ້ເຫຍື້ອ**

ໜ່ວຍບໍລິການເກັບມ້ຽນຂີ້ເຫຍື້ອ ຕ້ອງໄດ້ຮັບອະນຸຍາດ ຈາກອົງການພັດທະນາ ແລະ ບໍລິຫານຕົວເມືອງປາກຊັນ ຕ້ອງເຮັດສັນຍາກັບຜູ້ໃຊ້ບໍລິການ ກໍລະນີການບໍລິການຕິດຂັດຕ້ອງແຈ້ງໃຫ້ບ້ານ ຫຼື ຜູ້ໃຊ້ບໍລິການຂີ້ເຫຍື້ອໄດ້ຮັບຊາບກ່ອນລ່ວງໜ້າ 1 ອາທິດ, ຖ້າພາກສ່ວນໃດໜຶ່ງຈັດງານຕ່າງໆ ເຊິ່ງເປັນສາເຫດໃຫ້ມີປະລິມານຂີ້ເຫຍື້ອຫຼາຍຂຶ້ນ ເກີນກ່ວາສັນຍາທີ່ຕົກລົງກັນໄວ້ ຈະຕ້ອງໄດ້ເສຍຄ່າບໍລິການເກັບມ້ຽນຂີ້ເຫຍື້ອເພີ່ມ.

**ມາດຕາ 17. ການຂົນສົ່ງຂີ້ເຫຍື້ອໄປຖິ້ມຢູ່ສະໜາມຂີ້ເຫຍື້ອ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ລວມທັງໜ່ວຍບໍລິການເກັບມ້ຽນຂີ້ເຫຍື້ອທີ່ເອົາ

ຂີ້ເຫຍື້ອໄປຖິ້ມຢູ່ສະໜາມກຳຈັດຂີ້ເຫຍື້ອແຕ່ລະຄັ້ງຕ້ອງມີຜ້າປົກຫຸ້ມ ເພື່ອບໍ່ໃຫ້ຂີ້ເຫຍື້ອຕົກເຣ່ຍໃສ່ຕາມເສັ້ນທາງ, ສະຖານທີ່ອື່ນໆ ແລະ ຕ້ອງຖິ້ມໃສ່ຈຸດທີ່ຈັດສັນໄວ້ໃຫ້.

**ມາດຕາ 18. ການຖິ້ມຂີ້ເຫຍື້ອຕາມສະຖານທີ່ຕ່າງໆ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ບໍ່ໃຫ້ຖິ້ມຂີ້ເຫຍື້ອທຸກປະເພດໃສ່ເສັ້ນທາງ, ປ່າທາງ, ແຄມທາງ, ດິນເປົ່າຫວ່າງ, ສະຖານທີ່ສາທາລະນະ, ສະຖານທີ່ບໍລິການຄ້າຂາຍ, ສະຖານທີ່ມີການຈັດງານຕ່າງໆ, ຮ່ອງລະບາຍນ້ຳ, ຮ່ອງຫ້ວຍ, ນ້ຳຊັນ ແລະ ນ້ຳຂອງ ທີ່ເປັນສາເຫດເຮັດໃຫ້ສະພາບແວດລ້ອມຂອງຕົວເມືອງບໍ່ມີຄວາມສະອາດຈົບງາມ.

**ມາດຕາ 19. ການຖິ້ມຂີ້ເຫຍື້ອອອກຈາກຍານພາຫະນະ**

ການຖິ້ມຂີ້ເຫຍື້ອອອກຈາກຍານພາຫະນະຂອງບຸກຄົນ, ນິຕິບຸກຄົນ ໃນເວລາລົດແລ່ນ ແລະ ຈອດລົດຕາມເສັ້ນທາງ ຜູ້ຂັບລົດ, ຜູ້ໂດຍສານບໍ່ໃຫ້ຖິ້ມຂີ້ເຫຍື້ອ ອອກຈາກລົດຕາມລຳພັງໃຈ ເມື່ອຮອດບ່ອນຈອດລົດ ຫຼື ຄິວລົດ ຈຶ່ງເອົາຂີ້ເຫຍື້ອ ອອກມາຖິ້ມໃສ່ກະຕ່າ ຫຼື ຖັງຂີ້ເຫຍື້ອສາທາລະນະ, ລົດໂດຍສານທຸກຄັນຕ້ອງມີກະຕ່າ ຫຼື ຖົງຢາງ ເປັນບ່ອນເກັບມ້ຽນຂີ້ເຫຍື້ອ.

**ມາດຕາ 20. ການຈູດເຜົາຂີ້ເຫຍື້ອ ຫຼື ສິ່ງເສດເຫຼືອ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທຸກພາກສ່ວນ ບໍ່ໃຫ້ຈູດເຜົາຂີ້ເຫຍື້ອຢູ່ບໍລິເວນເຮືອນຕົນເອງ, ຢູ່ຕາມໂຮງຈັກ,ໂຮງງານ, ຕະຫຼາດ, ໂຮງຮຽນ, ໂຮງໝໍ, ບ້ານ, ແຄມທາງ ແລະ ສະຖານທີ່ອື່ນໆ ໃນຕົວເມືອງທີ່ເປັນມົນລະພິດ ເຊິ່ງເປັນຜົນກະທົບຕໍ່ສຸຂະພາບຂອງຄົນ, ສັດ ແລະ ສິ່ງແວດລ້ອມ.

**ມາດຕາ 21. ການປ່ອຍນ້ຳເສຍນ້ຳເປື້ອນ**

ບຸກຄົນ,ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ທີ່ມີການນຳໃຊ້ນ້ຳໃນຄົວເຮືອນ, ໂຮງຈັກ, ໂຮງງານ, ຕະຫຼາດ, ໂຮງຮຽນ, ໂຮງໝໍ,ໂຮງແຮມ, ຮ້ານອາຫານ, ແຄມທາງ ແລະ ສະຖານທີ່ອື່ນໆ ໃນຕົວເມືອງບໍ່ໃຫ້ປ່ອຍລົງສູ່ສະຖານທີ່ສາທາລະນະ ເຊິ່ງສ້າງກິ່ນເໝັນ ແລະ ອຸດຕັນທໍ່ລະບາຍນ້ຳ ທີ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມໃນຕົວເມືອງ.

## ໝວດທີ 4
## ອົງການຄຸ້ມຄອງການພັດທະນາຕົວເມືອງຂອງເມືອງປາກຊັນ

**ມາດຕາ 22. ອົງການຄຸ້ມຄອງການພັດທະນາຕົວເມືອງຂອງເມືອງປາກຊັນ**

ອົງການຄຸ້ມຄອງການພັດທະນາຕົວເມືອງຂອງເມືອງປາກຊັນ ປະກອບມີດັ່ງນີ້:

1. ອົງການປົກຄອງແຂວງ
2. ອົງການພັດທະນາ ແລະ ບໍລິຫານຕົວເມືອງປາກຊັນ;
3. ອົງການປົກຄອງບ້ານ.

**ມາດຕາ 23. ສິດ ແລະ ໜ້າທີ່ ຂອງອົງການປົກຄອງແຂວງ**

ສິດ ແລະ ໜ້າທີ່ ຂອງອົງການປົກຄອງແຂວງ ມີດັ່ງນີ້:

1. ຊີ້ນຳ-ນຳພາ, ສະໜອງບຸກຄະລາກອນ, ງົບປະມານ, ພາຫະນະອຸປະກອນເຂົ້າໃນວຽກງານການຄຸ້ມຄອງການພັດທະນາຕົວເມືອງຂອງເມືອງປາກຊັນ ຕາມຄວາມເໝາະສົມ;
2. ມອບສິດໃຫ້ອົງການພັດທະນາ ແລະ ບໍລິຫານຕົວເມືອງປາກຊັນ ເປັນເຈົ້າການໃນການຄຸ້ມຄອງການພັດທະນາຕົວເມືອງຂອງເມືອງປາກຊັນ ເປັນໃຈກາງໃນການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຕາມລະບຽບການ.

**ມາດຕາ 24. ສິດ ແລະ ໜ້າທີ່ ຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງປາກຊັນ**

ສິດ ແລະ ໜ້າທີ່ ຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງປາກຊັນ ມີດັ່ງນີ້:

1. ໂຄສະນາເຜີຍແຜ່ຂໍ້ຕົກລົງສະບັບນີ້, ໃຫ້ບຸກຄົນ, ນິຕິບຸກຄົນ ການຈັດຕັ້ງ ທີ່ດໍາລົງຊີວິດຢູ່ໃນຕົວເມືອງຂອງເມືອງປາກຊັນ ໃຫ້ເຂົ້າຮ່ວມ ແລະ ເປັນເຈົ້າການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ;
2. ເປັນຜູ້ແນະນໍາ, ຕິດຕາມກວດກາ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຄຸ້ມຄອງການພັດທະນາຕົວເມືອງຂອງເມືອງປາກຊັນ;
3. ວາງແຜນຈັດຕັ້ງປະຕິບັດຄຸ້ມຄອງ ແລະ ກວດກາ ວຽກງານການພັດທະນາຕົວເມືອງຂອງເມືອງປາກຊັນ;
4. ສ້າງແຫຼ່ງລາຍຮັບເຂົ້າໃນການປົກປັກຮັກສາ ແລະ ພັດທະນາຕົວເມືອງຂອງເມືອງປາກຊັນ ;
5. ຕິດຕາມກວດກາ ການເຄື່ອນໄຫວວຽກງານ ພ້ອມທັງສະຫຼຸບລາຍງານປະຈໍາເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ ປະຈໍາປີ ກ່ຽວກັບຜົນການຈັດຕັ້ງປະຕິບັດວຽກງານຂອງຕົນ ສົ່ງໃຫ້ອົງການທີ່ກ່ຽວຂ້ອງ ແລະ ຂັ້ນເທິງພ້ອມທັງຂໍທິດຊີ້ນໍາໃນການຈັດຕັ້ງປະຕິບັດວຽກງານ ເປັນປົກກະຕິ;
6. ອົງການພັດທະນາ ແລະ ບໍລິຫານຕົວເມືອງປາກຊັນ ເປັນໃຈກາງ ປະສານງານກັບຄະນະກໍາມະການ ທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດລະບຽບການປັບໃໝຕາມແຕ່ລະກໍລະນີ.
7. ສະເໜີຂັ້ນເທິງຂໍການຍ້ອງຍໍສັນລະເສີນຕໍ່ຜູ້ທີ່ມີຜົນງານ ແລະ ລົງວິໄນຕໍ່ທຸກພາກສ່ວນທີ່ລະເມີດຂໍ້ຕົກລົງສະບັບນີ້;
8. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 25. ສິດ ແລະ ໜ້າທີ່ ຂອງອົງການປົກຄອງບ້ານ**

ສິດ ແລະ ໜ້າທີ່ ອົງການປົກຄອງບ້ານ ມີດັ່ງນີ້:

1. ເປັນເຈົ້າການໃນການປຸກລະດົມປະຊາຊົນພາຍໃນບ້ານເຂົ້າຮ່ວມໃນການຄຸ້ມຄອງ ແລະ ພັດທະນາຕົວເມືອງຂອງເມືອງປາກຊັນ;
2. ໂຄສະນາເຜີຍແຜ່ຂໍ້ຕົກລົງສະບັບນີ້ ໃຫ້ທຸກຊັ້ນຄົນພາຍໃນບ້ານຂອງຕົນຮັບຮູ້ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ;
3. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນແກ້ໄຂບັນຫາຕ່າງໆກ່ຽວກັບການຄຸ້ມຄອງການພັດທະນາຕົວເມືອງຂອງເມືອງປາກຊັນ;
4. ຂັ້ນບ້ານຕ້ອງໄດ້ແຕ່ງຕັ້ງໃຫ້ມີຄະນະກວດກາ, ປັບໃໝຂອງບ້ານ, ບ້ານໃຫຍ່ 5 ທ່ານ, ບ້ານນ້ອຍ 3 ທ່ານ ເພື່ອຈັດຕັ້ງປະຕິບັດຢູ່ໃນຂອບເຂດຂັ້ນບ້ານຂອງຕົນໂດຍແມ່ນປະທານ ອພບຕ ຫຼື ແມ່ນເຈົ້າເມືອງເປັນຜູ້ແຕ່ງຕັ້ງຕາມການສະເໜີຂອງນາຍບ້ານ;
5. ເຮັດບົດບັນທຶກເຊັນສັນຍານໍາແຕ່ລະຄົວເຮືອນກ່ຽວກັບການອານາໄມຮັກສາຄວາມສະອາດໃນຂອບເຂດໜ້າເຮືອນຂອງຕົນ ໃຫ້ມີຄວາມສະອາດ ແລະ ມີຄວາມເປັນລະບຽບຮຽບຮ້ອຍ;
6. ປະກອບສ່ວນເປັນເຈົ້າການໃນການປະຕິບັດວິໄນ, ປັບໃໝຕໍ່ຜູ້ລະເມີດຂໍ້ຕົກລົງສະບັບນີ້.
7. ປະກອບສ່ວນເປັນເຈົ້າການໃນການຍ້ອງຍໍສັນລະເສີນ ຕໍ່ຜູ້ທີ່ມີຜົນງານໃນການປະຕິບັດຂໍ້ຕົກລົງສະບັບນີ້;
8. ສະຫຼຸບລາຍງານບັນຫາຕ່າງໆ ພາຍໃນບ້ານກ່ຽວກັບວຽກງານຄຸ້ມຄອງການພັດທະນາຕົວເມືອງຂອງເມືອງປາກຊັນໃຫ້ແກ່ອົງການພັດທະນາ ແລະ ບໍລິຫານຕົວເມືອງປາກຊັນ;
9. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 26. ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ມີພຶດຕິກຳ ດັ່ງຕໍ່ໄປນີ້:

1. ບຸກຄົນ,ນິຕິບຸກຄົນ, ອົງການຈັດຕັ້ງ ປ່ອຍປະດິນເປົ່າຫວ່າງຂອງຕົນເກີດຫຍ້າຮົກເຮື້ອ, ເປິະເປື້ອນ ໃນຕົວເມືອງຂອງເມືອງປາກຊັນ;
2. ນຳໃຊ້ເນື້ອທີ່ດິນ, ເຮືອນຂອງຕົນ ຫຼື ຂອງບຸກຄົນອື່ນໃນຂອບເຂດຕົວເມືອງເປັນບ່ອນເກັບມ້ຽນຂີ້ເຫຍື້ອ, ເສດເສດ ຫຼື ເກັບມ້ຽນວັດຖຸທີ່ເປັນພິດໂດຍບໍ່ໄດ້ຮັບອະນຸຍາດ;
3. ນຳໃຊ້ສະຖານທີ່ສາທາລະນະແຄມທາງເປັນບ່ອນຝາກລົດໂດຍບໍ່ໄດ້ຮັບອະນຸຍາດຈາກ ອົງການພັດທະນາ ແລະ ບໍລິຫານຕົວເມືອງປາກຊັນ;
4. ທັບມ້າງ ທຳລາຍຊັບສົມບັດສາທາລະນະເຊັ່ນ: ໄຟເຍືອງທາງ, ໄຟສວນສາທາລະນະ, ປ້າຍຈະລາຈອນ, ຫຼັກລາຍກັນຕົກ, ໂຖດອກໄມ້, ຕົ້ນໄມ້ທີ່ທາງການປູກໄວ້ ແລະ ອື່ນໆ;
5. ກາງເຕັ້ນ, ຂາຍເຄື່ອງທຸກຊະນິດໃສ່ສະຖານທີ່ສາທາລະນະໂດຍບໍ່ໄດ້ຮັບອະນຸຍາດເຊັ່ນ: ແຄມຖະໜົນ, ເຂດທາງຍ່າງ, ໜ້າສຳນັກງານຫ້ອງການ ແລະ ສະຖານທີ່ອື່ນໆ ເພື່ອຈັດງານບຸນທາງດ້ານວັດທະນະທຳ, ຮີດຄອງປະເພນີ ແລະ ງານສັງຄົມຂອງບຸກຄົນ ຫຼື ການຈັດຕັ້ງເປັນບ່ອນມ່ວນຊື່ນ ຫຼື ທຳພິທີການຕ່າງໆ;
6. ຈອດລົດຢູ່ເທິງຝາປິດຮ່ອງລະບາຍນ້ຳແຄມທາງ, ເອົາລົດຂຶ້ນຢຽບທາງຍ່າງ, ຈອດລົດເທິງທາງຍ່າງ, ນຳໃຊ້ເສັ້ນທາງ, ແຄມທາງເປັນບ່ອນລ້າງລົດ, ເປັນບ່ອນຈອດຖາວອນ ແລະ ວາງສິ່ງກີດຂວາງໃສ່ຂອບທາງ;
7. ອັດຕັນຮ່ອງນ້ຳຂ້າງທາງ, ຄອງນ້ຳທຳມະຊາດໃນຕົວເມືອງ;
8. ປ່ອຍສັດຊະຊາຍຕາມຖະໜົນຫົນທາງ ແລະ ເຂດສາທາລະນະໃນຕົວເມືອງເຊິ່ງເປັນການລົບກວນຕໍ່ຜູ້ອື່ນ , ສ້າງຄວາມເປິະເປື້ອນ ແລະ ກີດຂວາງການສັນຈອນ;
9. ຖິ້ມຂີ້ເຫຍື້ອ, ຖອກ, ກອງດິນ, ຫີນ, ແຮ່, ຊາຍ, ໄມ້, ເຫຼັກເສັ້ນ ແລະ ວັດສະດຸອື່ນໆໃສ່ບໍລິເວນເສັ້ນທາງ, ແຄມທາງ, ແຄມນ້ຳ, ໜອງນ້ຳ ແລະ ຮ່ອງລະບາຍນ້ຳຢ່າງເດັດຂາດ;
10. ແລ່ນລົດບັນທຸກທີ່ມີກິ່ນເໝັນສ້າງຄວາມເປິເປື້ອນໃສ່ເສັ້ນທາງຢູ່ພາຍໃນຕົວເມືອງຂອງເມືອງປາກຊັນຢ່າງເດັດຂາດ;
11. ສ້າງກິ່ນເໝັນ, ຂີວ, ຈູດຂີ້ເຫຍື້ອ, ລະບົບບຳບັດນ້ຳບໍ່ດີ, ນ້ຳເສດເຫຼືອຈາກການເຮັດເຂົ້າປຸ້ນ,ລ້ຽງສັດ, ນ້ຳເປື້ອນຈາກຄົວເຮືອນ, ສຳນັກງານ, ຮ້ານອາຫານ, ຕະຫຼາດ ແລະ ອື່ນໆ, ເຊິ່ງເປັນການລົບກວນຕໍ່ຄົນອື່ນ.

**ມາດຕາ 27. ຂໍ້ຫ້າມສຳລັບພະນັກງານ**

ຫ້າມພະນັກງານ, ເຈົ້າໜ້າທີ່ຂອງລັດມີພຶດຕິກຳດັ່ງນີ້: ສວຍໃຊ້ນິຕິກຳສະບັບນີ້ນາບຂູ່, ໃຊ້ສິດອຳນາດ, ຖານະຕຳແໜ່ງ, ໜ້າທີ່ຂອງຕົນ ຕົວະຍົວະລອກລວງ ເກັບເງິນເກີນລາຄາທີ່ທາງການອະນຸຍາດ, ລັກເກັບເງິນເອົາເອງບໍ່ມອບເຂົ້າລັດ ແລະ ໃຊ້ຈ່າຍເງິນຈາກການປັບໃໝທຸກກໍລະນີ ໂດຍບໍ່ໄດ້ຮັບອະນຸຍາດ ເພື່ອຜົນປະໂຫຍດສ່ວນຕົວ.

## ໝວດທີ 6
## ອົງການກວດກາການຄຸ້ມຄອງການພັດທະນາຕົວເມືອງຂອງເມືອງປາກຊັນ

**ມາດຕາ 28. ອົງການກວດກາການຄຸ້ມຄອງການພັດທະນາຕົວເມືອງຂອງເມືອງປາກຊັນ**

ອົງການກວດກາການຄຸ້ມຄອງການພັດທະນາຕົວເມືອງຂອງເມືອງປາກຊັນປະກອບດ້ວຍ:

1. ອົງການກວດກາພາຍໃນ ປະກອບມີ:

- ອົງການປົກຄອງແຂວງ;
- ອົງການພັດທະນາ ແລະ ບໍລິຫານຕົວເມືອງປາກຊັນ;
- ອົງການປົກຄອງບ້ານ.

2. ອົງການກວດກາພາຍນອກ ປະກອບມີ:
- ສະພາປະຊາຊົນແຂວງ;
- ພະແນກກວດກາລັດ;
- ອົງການແນວລາວສ້າງຊາດ;
- ອົງການຈັດຕັ້ງມະຫາຊົນ.

**ມາດຕາ 29. ເນື້ອໃນຂອງການກວດກາ**

ເນື້ອໃນຂອງການກວດກາ ມີດັ່ງນີ້:

1. ການຈັດຕັ້ງປະຕິບັດວຽກງານການເຄື່ອນໄຫວຂອງອົງການຄຸ້ມຄອງການພັດທະນາຕົວເມືອງ;
2. ການຈັດຕັ້ງປະຕິບັດວຽກງານການເຄື່ອນໄຫວຂອງອົງການປົກຄອງບ້ານ ແລະ ຄອບຄົວ.
3. ຄວາມຮັບຜິດຊອບ, ພຶດຕິກຳ ແລະ ແບບແຜນວິທີເຮັດວຽກຂອງພະນັກງານຄຸ້ມຄອງການພັດທະນາຕົວເມືອງ.

**ມາດຕາ 30. ຮູບການກວດກາ**

ຮູບການກວດກາ ມີດັ່ງນີ້:

1. ການກວດກາປົກກະຕິ;
2. ການກວດກາໂດຍມີແຈ້ງການໃຫ້ຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 31. ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ເກີດມີຜົນອັນສູງສຸດຕໍ່ການພັດທະນາ ແລະ ສ້າງສາຕົວເມືອງປາກຊັນຈະໄດ້ຮັບການສະເໜີຍ້ອງຍໍ ແລະ ປະຕິບັດນະໂຍບາຍຕາມຄວາມເໝາະສົມ.

**ມາດຕາ 32. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ຈະຖືກກ່າວເຕືອນ ສຶກສາອົບຮົມ, ລົງວິໄນ, ຖືກປັບໃໝ ແລະ ດຳເນີນຄະດີຕາມກົດໝາຍ.

**ມາດຕາ 33. ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ທີ່ມີລັກສະນະເບົາບາງ ແລະ ເປັນການກະທຳຜິດຄັ້ງທຳອິດ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ບໍ່ກໍ່ຄວາມເສຍຫາຍທີ່ມີມູນຄ່າບໍ່ຫຼາຍ ແຕ່ຫາກມີຄວາມຈິງໃຈລາຍງານ, ຮັບສາລະພາບ, ປ່ຽນແປງຕໍ່ການກະທຳທີ່ບໍ່ຖືກຕ້ອງຂອງຕົນ ໃຊ້ແທນຄືນຕໍ່ຜົນເສຍຫາຍ ກໍ່ຈະຖືກຕັກເຕືອນ ແລະ ສຶກສາອົບຮົມ.

**ມາດຕາ 34. ມາດຕະການປັບໃໝ**

ມາດຕາການປັບໃໝຕໍ່ຜູ້ທີ່ລະເມີດຂໍ້ຕົກລົງສະບັບນີ້ ມີດັ່ງນີ້:

1. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ທີ່ບໍ່ປົກປັກຮັກສາຕອນດິນຂອງຕົນເອງປ່ອຍໃຫ້ຮົກເຮື້ອ, ເປເພ່ຊຸດໂຊມ ແລະ ເປິະເປື້ອນ ຈະຖືກປັບໃໝ 50.000-300.000 ກີບ/ເດືອນ;
2. ບຸກຄົນ,ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ທີ່ນຳໃຊ້ເນື້ອທີ່ດິນໃນຂອບເຂດດິນສະຫງວນຂອງ

ລັດ, ດິນສະຫງວນທາງ ແລະ ດິນສາທາລະນະ ບໍ່ໄດ້ຮັບອະນຸຍາດຈາກ ອົງການພັດທະນາ ແລະ ບໍລິຫານຕົວເມືອງປາກຊັນ ແລະ ຂະແໜງການທີ່ກ່ຽວຂ້ອງ ຈະຖືກປັບໃໝ 100.000 ກີບ ພ້ອມທັງໃຫ້ຢຸດເຊົາກິດຈະການ ແລະ ອານາໄມຄືນ;

3. ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ຂຸດດິນ, ຈົກດິນ, ຖົມດິນ, ປັບໜ້າດິນ, ເຈາະນ້ຳບາດານ ແລະ ຈົກໜອງປາໃນຕົວເມືອງຂອງເມືອງປາກຊັນ ທີ່ບໍ່ໄດ້ຮັບອະນຸຍາດພາກສ່ວນທີ່ກ່ຽວຂ້ອງ ຈະຖືກປັບໃໝ 100.000 ກີບ ພ້ອມທັງໃຫ້ຢຸດເຊົາກິດຈະການ;
4. ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ຂຸດດິນ, ຖົມດິນ, ປັບໜ້າດິນທີ່ສູງກ່ວາດິນອ້ອມຂ້າງ ແລະ ເສັ້ນທາງທີ່ພາໃຫ້ສະພາບພື້ນທີ່ດິນມີການປ່ຽນແປງຈາກສະພາບເດີມ ສົ່ງຜົນກະທົບຕໍ່ບຸກຄົນ ແລະ ການຈັດຕັ້ງ ເຮັດໃຫ້ນ້ຳ ແລະ ເສດດິນຕ່າງໆ ໄຫຼລົງສູ່ເສັ້ນທາງ ຫຼື ຕອນດິນອ້ອມຂ້າງ ຈະຖືກປັບໃໝ 50.000 ກີບ/1 ແມັດຍາວ ພ້ອມທັງຮັບຜິດຊອບແກ້ໄຂຕໍ່ເຫດການດັ່ງກ່າວ;
5. ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ນຳໃຊ້ເນື້ອທີ່ດິນ, ເຮືອນຂອງຕົນ ຫຼື ຂອງບຸກຄົນອື່ນໃນຂອບເຂດຕົວເມືອງເປັນບ່ອນເກັບມ້ຽນຂີ້ເຫຍື້ອ, ເຫຼັກເສດ ຫຼື ເກັບມ້ຽນວັດຖຸທີ່ເປັນພິດ ຈະຖືກປັບໃໝ 100.000-500.000 ກີບ, ພ້ອມທັງໃຫ້ຢຸດເຊົາ;
6. ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງຕ່າງໆ ທີ່ກໍ່ສ້າງປ້າຍໂຄສະນາ ຫຼື ຕິດຕັ້ງປ້າຍໂຄສະນາໃດໜຶ່ງພາຍໃນຕົວເມືອງຂອງເມືອງປາກຊັນ ທີ່ບໍ່ໄດ້ຮັບອະນຸຍາດ ທາງດ້ານເຕັກນິກ ສະຖານທີ່ຕິດຕັ້ງ ຈາກ ອົງການພັດທະນາ ແລະ ບໍລິຫານຕົວເມືອງປາກຊັນ ຈະຖືກປັບໃໝ 100.000 ກີບ/ປ້າຍ ພ້ອມໃຫ້ຢຸດເຊົາກິດຈະການດັ່ງກ່າວ;
7. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ທີ່ຕິດປ້າຍຄຳຂວັນຂ້າມທາງ, ແຄມທາງ, ສະຖານທີ່ສາທາລະນະ ທີ່ບໍ່ໄດ້ຮັບອະນຸຍາດຈາກ ອົງການພັດທະນາ ແລະ ບໍລິຫານຕົວເມືອງປາກຊັນ ຈະຖືກປັບໃໝ 50.000 ກີບ/ປ້າຍ ພ້ອມໃຫ້ຮື້ຖອນອອກ;
8. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ທີ່ປຸກສ້າງ, ສ້ອມແປງ, ຕໍ່ເຕີມອາຄານ, ເຮືອນ, ຮ້ານຄ້າ, ຮ້ານອາຫານ,ໂຮງແຮມ, ສາງສິນຄ້າ, ສຳນັກງານ, ຫ້ອງການ, ປ້ຳນ້ຳມັນ ແລະ ອື່ນໆ ທີ່ບໍ່ໄດ້ຮັບອະນຸຍາດພາກສ່ວນທີ່ກ່ຽວຂ້ອງ ຈະຖືກປັບໃໝ 100.000 ກີບ ພ້ອມທັງໃຫ້ຢຸດເຊົາກິດຈະການ;
9. ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ສ້າງຄວາມເສຍຫາຍຕໍ່ຊັບສິນສາທາລະນະເຊັ່ນ: ສວນສາທາ ລະນະ, ໄຟຟ້າເບື້ອງທາງ, ໄຟຟ້າປະດັບປະດາຕົວເມືອງ, ປ້າຍໂຄສະນາຕ່າງໆ, ປ້າຍສັນຍານຈາລະຈອນ, ໂຖດອກໄມ້, ຕົ້ນໄມ້ປະດັບຕາມເຂດສະຫງວນທາງ, ຕາມດິນສາທາລະນະ ແລະ ອື່ນໆ ຈະຖືກປັບໃໝ 100.000 ກີບ ຫາ 500.000 ກີບ, ພ້ອມທັງຮັບຜິດຊອບຄ່າເສຍຫາຍທັງໝົດທີ່ເກີດຂຶ້ນ;
10. ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ຂາຍເຄື່ອງຕາມເຂດສະຫງວນທາງ, ແຄມທາງ ແລະ ບ່າທາງ ທີ່ບໍ່ໄດ້ຮັບອະນຸຍາດຈາກ ອົງການພັດທະນາ ແລະ ບໍລິຫານຕົວເມືອງປາກຊັນ ຈະຖືກປັບໃໝດັ່ງນີ້:
    - ຄັ້ງທີ 1: 30.000 ກີບ ພ້ອມທັງຢຸດເຊົາ;
    - ຄັ້ງທີ 2: 50.000ກີບ ພ້ອມທັງຍຶດເອົາເຄື່ອງທີ່ວາງຂາຍຢູ່ບ່ອນນັ້ນໄປໄວ້ຢູ່ຫ້ອງການ ຂອງເຈົ້າໜ້າທີ່ແລ້ວຈຶ່ງໄກ່ເກ່ຍກັນຕາມຫຼັງ;
11. ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ນຳໃຊ້ສະຖານທີ່ສາທາລະນະເປັນບ່ອນຈັດກິດຈະກຳຕ່າງໆ ຊົ່ວຄາວເຊັ່ນ: ງານຕະຫຼາດນັດ, ງານບຸນປະເພນີຂອງທ້ອງຖິ່ນ, ຂອງຄອບຄົວ ແລະ ອື່ນໆ ທີ່ບໍ່ໄດ້ຮັບ ອະນຸຍາດຈາກ ອົງການພັດທະນາ ແລະ ບໍລິຫານຕົວເມືອງປາກຊັນ ຈະຖືກປັບໃໝ 100.000 ກີບ ຫາ 1.000.000 ກີບ, ພ້ອມທັງໃຫ້ຢຸດເຊົາກິດຈະກຳດັ່ງກ່າວ;
12. ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ນຳໃຊ້ສະຖານທີ່ສາທາລະນະແຄມທາງເປັນບ່ອນຝາກລົດໂດຍບໍ່ໄດ້ຮັບອະນຸຍາດຈາກ ອົງການພັດທະນາ ແລະ ບໍລິຫານຕົວເມືອງປາກຊັນ ຈະຖືກປັບໃໝ 100.000 ກີບ

ຫາ 1.000.000 ກີບ/ຄັ້ງ, ພ້ອມທັງໃຫ້ຢຸດເຊົາກິດຈະກຳດັ່ງກ່າວ;

13. ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ເຂົ້າໄປໃຫ້ການບໍລິການຈັດງານສິ່ງສະການ ທີ່ປ່າຊ້າເມືອງປາກຊັນ ທີ່ບໍ່ໄດ້ຮັບອະນຸຍາດ ຈາກ ອົງການພັດທະນາ ແລະ ບໍລິຫານຕົວເມືອງປາກຊັນ ຈະຖືກປັບໃໝດັ່ງນີ້:
   - ຄັ້ງທີ 1: 200.000 ກີບ, ພ້ອມໃຫ້ອານາໄມສະຖານທີ່ດັ່ງກ່າວໃຫ້ສະອາດ;
   - ຄັ້ງທີ 2: 400.000 ກີບ, ພ້ອມໃຫ້ອານາໄມສະຖານທີ່ດັ່ງກ່າວໃຫ້ສະອາດ;
   - ຄັ້ງທີ 3: 600.000 ກີບ, ພ້ອມໃຫ້ອານາໄມສະຖານທີ່ດັ່ງກ່າວໃຫ້ສະອາດ ແລະ ບໍ່ໃຫ້ເຂົ້າມາໃຫ້ບໍລິການຈັດງານສິ່ງສະການ ທີ່ປ່າຊ້າເມືອງປາກຊັນ;

14. ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ມີສິ່ງປຸກສ້າງຕ່າງໆ ຕັ້ງຢູ່ແຄມຖະໜົນຫົນທາງ ທີ່ບໍ່ເປັນເຈົ້າການໃນການປົກປັກຮັກສາອານາໄມໜ້າທາງ, ທາງຍ່າງ, ຮູລະບາຍນໍ້າ, ຮ່ອງລະບາຍນໍ້າ ເຂດໜ້າບ້ານ, ເຂດທີ່ດິນກຳມະສິດຂອງຕົນ ເຮັດໃຫ້ມີຂີ້ເຫຍື້ອຊະຊາຍ, ເກີດປ່າຫຍ້າຮົກເຮື້ອຫຍ້າສູງເກີນ 20 ຊັງຕີແມັດ, ສິ່ງອຸດຕັນຮູນໍ້າ ແລະ ຄອງລະບາຍນໍ້າຕ່າງໆ ຈະຖືກປັບໃໝ 10.000 ກີບ/ 1 ແມັດຍາວ (ຄິດໄລ່ຕາມໜ້າທາງ);

15. ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ກອງດິນ, ຫີນ-ຊາຍ, ໄມ້ ແລະ ວັດສະດຸອື່ນໆ ຢູ່ດິນສາທາລະນະ, ແຄມທາງລົດ, ທາງຍ່າງ, ເຂດສະຫງວນຕາມແຄມທາງຫຼວງ ແລະ ສະຖານທີ່ອື່ນໆ ທີ່ເປັນການກີດຂວາງບໍ່ເປັນລະບຽບຮຽບຮ້ອຍ ແລະ ບໍ່ສະອາດງາມຕາ ຈະຖືກປັບໃໝ 30.000 ກີບ/ 1 ແມັດຍາວ/ ວັນ ແລະ ໃຫ້ຍ້າຍອອກພາຍໃນກຳນົດ 7 ວັນ;

16. ບຸກຄົນ, ນິຕິບຸກຄົນ ທີ່ຈອດລົດທຸກປະເພດທີ່ບໍ່ປະຕິບັດຕາມກົດໝາຍຈາລະຈອນ ແລະ ລະບຽບການທີ່ກຳນົດໄວ້ ຈະຖືກປັບໃໝຄື:
    1. ລົດກະບະ, ລົດຕູ້, ລົດເກັງ ແລະ ລົດສາມລໍ້ 30.000 ກີບ/ຄັນ/ຄັ້ງ;
    2. ປະເພດລົດບັນທຸກ, ລົດໂດຍສານກາຍ 50.000 ກີບ/ຄັນ/ຄັ້ງ;

    ຖ້າກວດພົບເຫັນວ່າແມ່ນລົດຄັນເກົ່າຄັ້ງທີ 2 ຈະຖືກປັບໃໝເປັນສອງເທົ່າຕົວຂອງອັດຕາປັບໃໝຂ້າງເທິງນີ້, ພ້ອມທັງຍຶດເອກະສານ ຫຼື ກັກລົດໄວ້ຊົ່ວຄາວ ເພື່ອລໍຖ້າການແກ້ໄຂຕາມລະບຽບກົດໝາຍ.

17. ບຸກຄົນ, ນິຕິບຸກຄົນ ບໍ່ໃຫ້ເອົາລົດຂຶ້ນຢຽບ ຫຼື ຈອດຕາມທາງຍ່າງ ທີ່ເປັນການກີດຂວາງ ແລະ ສ້າງຄວາມເສຍຫາຍຕໍ່ຊັບສິນຂອງລັດ ຈະຖືກປັບໃໝຄື:
    1. ລົດສາມລໍ້ 20.000 ກີບ/ຄັນ/ຄັ້ງ;
    2. ລົດກະບະ, ລົດຕູ້ 30.000 ກີບ/ຄັນ/ຄັ້ງ;
    3. ລົດບັນທຸກ, ລົດໂດຍສານ 50.000 ກີບ/ຄັນ/ຄັ້ງ;

    ຖ້າຫາກກວດພົບເຫັນເປັນຄັ້ງທີ 2 ຈະຖືກປັບໃໝເປັນ 2 ເທົ່າຕົວ ພ້ອມທັງຍຶດເອກະສານ ຫຼື ກັກລົດໄວ້ຊົ່ວຄາວ ເພື່ອລໍຖ້າການແກ້ໄຂຕາມລະບຽບກົດໝາຍ.

18. ບຸກຄົນ, ນິຕິບຸກຄົນ ທີ່ສ້ອມແປງລົດ, ລ້າງລົດ ທຸກປະເພດໃສ່ໜ້າຖະໜົນຫົນທາງ, ທາງຍາງ ແລະ ເຂດສາທາລະນະ ສ້າງຄວາມເປິະເປື້ອນ ຈະຖືກປັບໃໝຄື:
    1. ລົດຈັກ 10,000 ກີບ/ຄັນ/ຄັ້ງ;
    2. ລົດກະບະ-ລົດຕູ້ 30,000 ກີບ/ຄັນ/ຄັ້ງ;
    3. ລົດບັນທຸກ 6-10 ລໍ້ 50,000 ກີບ/ຄັນ/ຄັ້ງ;

    ຖ້າພົບເຫັນເປັນຄັ້ງທີ່ 2 ຈະຖືກປັບໃໝເປັນ 2 ເທົ່າຕົວ ພ້ອມທັງໃຫ້ເຮັດອານາໄມຄືນໃຫ້ສະອາດ.

19. ບຸກຄົນ, ນິຕິບຸກຄົນ ທີ່ໃຫ້ບໍລິການຂົນສົ່ງຫີນ-ຊາຍ, ດິນດຳ, ດິນແດງ ຕົກເຮ່ຍໃສ່ເສັ້ນທາງ ແລະ ນັບທັງດິນຕົມຕິດຕີນລົດ ສ້າງຄວາມເປິະເປື້ອນ ຈະຖືກປັບໃໝ 20,000 ກີບ/ແມັດຍາວ ພ້ອມທັງໃຫ້ອານາໄມໃຫ້ສະອາດ;

20. ບຸກຄົນ, ນິຕິບຸກຄົນ ທີ່ມີລົດຂົນສົ່ງປະເພດ 6 ລໍ້, 10 ລໍ້, ລົດພວງ ໃຫ້ບໍລິການຂົນສົ່ງດິນ, ຫີນ, ຊາຍ, ຫີນພູ, ວັດສະດຸກໍ່ສ້າງ ແລະ ອື່ນໆ ບໍ່ອະນຸຍາດໃຫ້ຂົນສົ່ງເຂົ້າຕາມເສັ້ນທາງໃນເທດສະບານ(ຍົກເວັ້ນແຕ່ ທາງ 13 ໃຕ້ ແລະ 4 ເບ) ຖ້າຝ່າຝືນ ຫຼື ລະເມີດ ຈະຖືກປັບໃໝຄື:
    1. ລົດ 6 ລໍ້ນໍ້າໜັກລວມເກີນ 10ໂຕນ 300.000 ກີບ/ຄັ້ງ, ພ້ອມທັງໃຫ້ຢຸດເຊົາກິດຈະການ;
    2. ລົດສິບລໍ້, ລົດພວງ 500.000 ກີບ/ຄັ້ງ; ພ້ອມທັງໃຫ້ຢຸດເຊົາກິດຈະການ.
21. ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທີ່ປ່ອຍສັດລ້ຽງຂອງຕົນຊະຊາຍເຊັ່ນ: ແບ້, ງົວ, ຄວາຍ, ມ້າ ເປັນຕົ້ນ ຈະຖືກປັບໃໝຄື:
    - ຄັ້ງທີ 1 : ປັບໃໝ 100.000 ກີບ/ຄັ້ງ/ໂຕ;
    - ຄັ້ງທີ 2 : ປັບໃໝ 200.000 ກີບ/ຄັ້ງ/ໂຕ, ຍຶດເປັນຂອງລັດຢ່າງຂາດຕົວ
    1. ກໍລະນີເຈົ້າໜ້າທີ່ ຈັບສັດມາເພື່ອລໍຖ້າການໄກ່ເກ່ຍຈາກເຈົ້າຂອງສັດ ເຈົ້າຂອງສັດຕ້ອງຮັບຜິດຊອບ ຕໍ່ຄ່າສິ້ນເປືອງໃນການລ້ຽງສັດດັ່ງກ່າວ
    2. ກໍລະນີສັດດັ່ງກ່າວ,ທີ່ຖືກຈັບຫາກຕາຍດ້ວຍເຫດຜົນອື່ນໆຜູ້ຈັບສັດຈະບໍ່ມີຄວາມຮັບຜິດຊອບ ປະການໃດ ແຕ່ຖ້າຜູ້ຈັບສັດຫາກທຸບຕີສັດຈົນລົ້ມຕາຍໂດຍບໍ່ມີເຫດຜົນ ຜູ້ນັ້ນຈະໄດ້ຮັບຜິດຊອບ ຕໍ່ສັດດັ່ງກ່າວນັ້ນ.
22. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ທີ່ເອົາຂີ້ເຫຍື້ອໄປຖິ້ມຢູ່ສະໜາມກໍາຈັດຂີ້ເຫຍື້ອ ດ້ວຍຕົນເອງແຕ່ລະຄັ້ງບໍ່ມີຜ້າປົກຫຸ້ມ ຂີ້ເຫຍື້ອຕົກເຮ່ຍໃສ່ຕາມເສັ້ນທາງ ແລະ ສະຖານທີ່ອື່ນໆ ຈະຖືກ ປັບໃໝ 100.000 ກີບ/ຄັ້ງ, ພ້ອມທັງອານາໄມຄືນ.
23. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ທີ່ຖິ້ມຂີ້ເຫຍື້ອທຸກປະເພດໃສ່ເສັ້ນທາງ, ບ່າທາງ, ແຄມທາງ, ດິນເປົ່າຫວ່າງ, ສະຖານທີ່ສາທາລະນະ, ສະຖານທີ່ບໍລິການຄ້າຂາຍ, ສະຖານທີ່ມີການຈັດງານ ຕ່າງໆ, ຮ່ອງລະບາຍນໍ້າ, ຮ່ອງຫ້ວຍ, ນໍ້າຊຸ່ມ ນໍ້າຂອງ ແລະ ສະຖານທີ່ອື່ນໆ ຈະຖືກປັບໃໝຄື:
    1. ປະລິມານຂີ້ເຫຍື້ອແຕ່ 1 ຖົງຂຶ້ນໄປ 100.000 - 500.000 ກີບ/ຄັ້ງ, ພ້ອມທັງອານາໄມຄືນ;
    2. ປະເພດລົດກະບະ ແລະ ລົດໄຖນາ 500.000 ກີບ/ຄັນ/ຄັ້ງ, ພ້ອມທັງອານາໄມຄືນ;
    3. ລົດບັນທຸກ 6-10 ລໍ້ 1.000.000 ກີບ/ຄັນ/ຄັ້ງ, ພ້ອມທັງອານາໄມຄືນ.
    4. ຖ້າພົບເຫັນອີກ ຈະຖືກປັບໃໝ 2 ເທົ່າຕົວຂອງມູນຄ່າປັບໃໝ.
24. ບຸກຄົນ, ນິຕິບຸກຄົນ ໃນເວລາລົດແລ່ນ ແລະ ຈອດລົດຕາມເສັ້ນທາງ ຜູ້ຂັບລົດ, ຜູ້ໂດຍສານ ທີ່ຖິ້ມຂີ້ ເຫຍື້ອ ອອກຈາກລົດ ຈະຖືກປັບໃໝ 50.000 – 100.000 ກີບ/ຄັ້ງ, ພ້ອມທັງອານາໄມຄືນ;
25. ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທຸກພາກສ່ວນ ທີ່ຈູດເຜົາຂີ້ເຫຍື້ອໃນຕົວເມືອງ,ເຂດຊຸມຊົນໃນຕົວເມືອງ , ຢູ່ຕາມໂຮງຈັກ,ໂຮງງານ, ຕະຫຼາດ, ໂຮງຮຽນ, ໂຮງໝໍ, ບ້ານ, ແຄມທາງ ແລະ ສະຖານທີ່ອື່ນໆ ຈະຖືກ ປັບໃໝຄື:
    - ຄັ້ງທີ 1: ປັບໃໝ 100.000-500.000 ກີບ;
    - ຄັ້ງທີ 2: ປັບໃໝ 2 ເທົ່າຕົວຂອງມູນຄ່າປັບໃໝ.
26. ບຸກຄົນ, ນິຕິບຸກຄົນ ທີ່ແລ່ນລົດບັນທຸກທີ່ມີກິ່ນເໝັນສ້າງຄວາມເປິເປື້ອນໃສ່ເສັ້ນທາງຢູ່ພາຍໃນ ເທດສະບານຕົວເມືອງປາກຊັນຈະຖືກປັບໃໝ 100.000-500.000 ກີບ/ຄັ້ງ
27. ບຸກຄົນ,ນິຕິບຸກຄົນ ແລະ ການຈັດຕັ້ງທຸກພາກສ່ວນ ທີ່ປ່ອຍນໍ້າເສຍນໍ້າເປື້ອນລົງສູ່ສະຖານທີ່ສາທາລະນະ ເຊິ່ງສ້າງກິ່ນເໝັນ ແລະ ອຸດຕັນທໍ່ລະບາຍນໍ້າ ຈະຖືກປັບໃໝ 100.000-500.000 ກີບ/ຄັ້ງ, ພ້ອມທັງ ປັບປຸງດັດແປງໃຫ້ດີພາຍໃນ 1 ເດືອນ.

**ມາດຕາ 35. ການດໍາເນີນການປັບໃໝ**

ເວລາພົບເຫັນການລະເມີດຂໍ້ຕົກລົງສະບັບນີ້ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຄະນະກຳມະການກວດກາຄວາມເປັນລະບຽບຮຽບຮ້ອຍຂອງຕົວເມືອງ ຈະເຮັດບົດບັນທຶກສຶກສາອົບຮົມກັບພາກສ່ວນທີ່ກ່ຽວຂ້ອງ ໃນກໍລະນີທີ່ບໍ່ກໍ່ຄວາມເສຍຫາຍຕໍ່ຊີວິດ ແລະ ຊັບສິນ, ກໍລະນີເກີດຄວາມເສຍຫາຍຈະໄດ້ປະເມີນການໃຊ້ແທນ, ພາຍຫຼັງທີ່ໄດ້ເຮັດບົດບັນທຶກສຶກສາອົບຮົມແລ້ວ ນິຕິບຸກຄົນ ແລະ ການຈັດຕັ້ງດັ່ງກ່າວ ຫາກຍັງລະເມີດຈະໄດ້ດໍາເນີນການປັບໃໝຕາມຂໍ້ຕົກລົງສະບັບນີ້.

**ມາດຕາ 36. ຄະນະກໍາມະການປັບໃໝ**

ຄະນະກໍາມະການປັບໃໝ ແມ່ນຄະນະກໍາມະການດຽວກັນ ກັບຄະນະກໍາມະການກວດກາຄຸ້ມຄອງຈັດສັນຄວາມເປັນລະບຽບຮຽບຮ້ອຍໃນຕົວເມືອງປາກຊັນ ຕາມການແຕ່ງຕັ້ງຂອງເຈົ້າເມືອງປາກຊັນ ເຊິ່ງປະກອບມີພາກສ່ວນຕ່າງໆ ດັ່ງນີ້:

1. ອົງການພັດທະນາ ແລະ ບໍລິຫານຕົວເມືອງປາກຊັນ;
2. ຫ້ອງວ່າການປົກຄອງເມືອງປາກຊັນ;
3. ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງປາກຊັນ;
4. ຫ້ອງການຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມເມືອງປາກຊັນ;
5. ກອງບັນຊາການ ປກສ ເມືອງປາກຊັນ;
6. ອົງການປົກຄອງບ້ານ.

**ມາດຕາ 37. ມາດຕະການທາງແພ່ງ**

ບຸກຄົນ ນິຕິບຸກຄົນ, ການຈັດຕັ້ງທຸກພາກສ່ວນທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ເຊິ່ງກໍ່ຄວາມເສຍຫາຍໃຫ້ແກ່ຊີວິດ ແລະ ຊັບສິນ ບຸກຄົນ ນິຕິບຸກຄົນ, ການຈັດຕັ້ງທຸກພາກສ່ວນ ເນື່ອງຈາກການກະທໍາທີ່ບໍ່ຖືກຕ້ອງ ຈະຖືກດໍາເນີນຄະດີຕາມກົດໝາຍ ແລະ ໃຊ້ແທນຄ່າເສຍຫາຍທາງແພ່ງ ຕາມທີ່ຕົນໄດ້ກໍ່ຂຶ້ນຢ່າງຄົບຖ້ວນ.

**ມາດຕາ 38. ມາດຕະການທາງອາຍາ**

ບຸກຄົນ ນິຕິບຸກຄົນ, ການຈັດຕັ້ງທຸກພາກສ່ວນທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ເຊິ່ງເປັນການກະທໍາໂດຍບໍ່ໄດ້ຮັບອະນຸຍາດ ແລະ ຜິດຕໍ່ລະບຽບກົດໝາຍ ທີ່ກໍ່ຄວາມເສຍຫາຍຕໍ່ວຽກງານການຄຸ້ມຄອງການພັດທະນາຕົວເມືອງຂອງເມືອງປາກຊັນ ຈະຖືກດໍາເນີນຄະດີອາຍາ ຕາມປະມວນກົດໝາຍອາຍາ.

**ມາດຕາ 39. ການຄຸ້ມຄອງເງິນທີ່ໄດ້ຈາກການປັບໃໝ**

ການຄຸ້ມຄອງເງິນທີ່ໄດ້ຈາກການປັບໃໝ ໃຫ້ປະຕິບັດດັ່ງນີ້:

- 30% ມອບເຂົ້າເປັນເງິນບໍລິຫານຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງປາກຊັນ ເພື່ອນໍາໃຊ້ເຂົ້າໃນການຕິດຕາມ, ການກວດກາຄຸ້ມຄອງການພັດທະນາຕົວເມືອງປາກຊັນ;
- 30% ມອບເຂົ້າຄັງບໍລິຫານຂອງບ້ານ ເພື່ອໃຊ້ຈ່າຍໃນການບໍລິຫານ ແລະ ພັດທະນາບ້ານ;
- 40% ໃຫ້ຄະນະກໍາມະການຜູ້ຈັດຕັ້ງປະຕິບັດຕົວຈິງນໍາໃຊ້ເຂົ້າໃນການໃຊ້ຈ່າຍສິ້ນເປືອງເປັນຕົ້ນແມ່ນ: ຄ່ານໍ້າມັນ, ອັດຕາກິນ, ຈັດກອງປະຊຸມຂອງຄະນະກໍາມະການດັ່ງກ່າວ;

ໃນເວລາຈັດຕັ້ງປະຕິບັດຕົວຈິງຈະມີນິຕິກໍາແນະນໍາສະເພາະໃນການນໍາໃຊ້ຮ່ວງເງິນດັ່ງກ່າວ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 40. ການຈັດຕັ້ງປະຕິບັດ**

ຂໍ້ຕົກລົງສະບັບນີ້ມອບໃຫ້ອົງການພັດທະນາ ແລະ ບໍລິຫານຕົວເມືອງປາກຊັນ ເປັນເຈົ້າການໃນການຈັດຕັ້ງປະຕິບັດຕົວຈິງໂດຍປະສານສົມທົບ ກັບ ອົງການປົກຄອງແຂວງ, ອົງການປົກຄອງບ້ານ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

**ມາດຕາ 41. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນເຈົ້າແຂວງລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການສິບຫ້າວັນ. ຂໍ້ຕົກລົງສະບັບອື່ນທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ເຈົ້າແຂວງບໍລິຄໍາໄຊ**

ເຈົ້າແຂວງ ບໍລິຄໍາໄຊ

ປອ. ກອງແກ້ວ ໄຊສົງຄາມ